ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1849 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 12 MAY 2026

ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສຳລັບ ວຽກສ້ອມແປງເສັ້ນທາງແຕ່ ໜ້າເຂື່ອນ ໄປຫາ Intake ທີ່ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ຂອງ ຜ-ຟຟລ ພາຍໃຕ້ ລະບຽບ ຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບປັບປຸງ ປີ 2024, ລົງວັນທີ 12/04/2024.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍກົດໝາຍ-ສັນຍາ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ: 13/05/2026 ເຖິງວັນທີ: 26/05/2026 , ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສຳນັກງານຕັ້ງຢູ່ ຖະໜົນມິດຕະພາບ ລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141, 316 834.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ວັນທີ 13/05/2026 ເຖິງວັນທີ: 26/05/2026 , ໃນລາຄາ 500.000 (ຫ້າແສນ) ກີບ/ຊຸດ, ວິທີການຊຳລະຕ້ອງເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ການລົງສຳຫຼວດ ແລະ ເກັບກຳຂໍ້ມູນ ຈະໄດ້ຈັດຂຶ້ນໃນວັນທີ: 27/05/2026 ເວລາ 10 : 30 ໂມງ, ບ້ານສະທົ່ວໃຕ້, ເມືອງທ່າແຕງ, ແຂວງເຊກອງ (ຖ້າເປັນພາກັ່ງຄັບ).

ສຳລັບການເດີນທາງ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນທັງໝົດ ເປັນຄວາມຮັບຜິດຊອບ ຂອງ ຜູ້ເຂົ້າປະມູນ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14 : 00 ໂມງ, ວັນທີ 12/06/2026 . ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນຈະເລີ່ມເປີດໃນເວລາ 14 : 00 ໂມງ, ວັນທີ 12/06/2026 . ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸກສະຫວາດ ໄສສຸພັນ
ຜູ້ອຳນວຍການໃຫຍ່

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.
ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ: edlgenhq@edlgen.com.la; ເວັບໄຊທ: www.edlgen.com.la